ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ເຂົ້າ ເລກທີ 0516
ວັນທີ 18/3/21

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 267 /ຫລນຍ

ນະຄອນຫຼວງວຽງຈັນ, ວັນທີ 17.03.2021

# ແຈ້ງການ

ຮຽນ: - ທ່ານ ລັດຖະມົນຕີ ກະຊວງການຕ່າງປະເທດ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື. ✓
- ທ່ານ ເຈົ້າແຂວງ ຈຳປາສັກ ທີ່ນັບຖື.

ເລື່ອງ: ການສະເໜີຂໍອະນຸຍາດນຳໃຊ້ລົດຂົນສົ່ງຈາກປະເທດເພື່ອນບ້ານໃກ້ຄຽງ ເພື່ອເຂົ້າມາລະບາຍສິນຄ້າກະສິກຳ ປະເພດມັນຕົ້ນ.

– ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017.
– ອີງຕາມ ໜັງສືສະເໜີ ຂອງສະມາຄົມມັນຕົ້ນລາວ ສະບັບເລກທີ 114/ສມລ, ລົງວັນທີ 12 ກຸມພາ 2021.
– ອີງຕາມການຊີ້ນຳ ຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ລົງວັນທີ 05 ມີນາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ມາຍັງທ່ານຊາບ ດັ່ງນີ້:

1. ເຫັນດີໃຫ້ສືບຕໍ່ໂຈະການອະນຸຍາດໃຫ້ລົດຂົນສົ່ງ ຂອງປະເທດເພື່ອນບ້ານໃກ້ຄຽງ ເຂົ້າມາຂົນສົ່ງມັນຕົ້ນຢູ່ພາຍໃນ ຕາມການຕົກລົງ ຂອງແຂວງຈຳປາສັກ ທີ່ລະບຸໄວ້ໃນແຈ້ງການ ສະບັບເລກທີ 04/ຈຂ.ຈສ, ລົງວັນທີ 23 ມັງກອນ 2021 ເນື່ອງຈາກໄລຍະນີ້ ຍັງມີຄວາມສ່ຽງສູງແຜ່ລະບາດພະຍາດ COVID-19.

2. ສຳລັບການຂົນສົ່ງມັນຕົ້ນໄລຍະນີ້ ແມ່ນໃຫ້ນຳໃຊ້ລົດຂົນສົ່ງພາຍໃນ ໂດຍມອບໃຫ້ແຂວງຈຳປາສັກ ເປັນໃຈກາງຮັບຮ້ອມສົມທົບກັບ ບັນດາແຂວງພາກໃຕ້ຂອງລາວ, ສະມາຄົມຂົນສົ່ງພາຍໃນແຂວງຈຳປາສັກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ແລະ ແກ້ໄຂບັນດາຂໍ້ສະເໜີ ຂອງສະມາຄົມມັນຕົ້ນລາວ ໂດຍໄວ ເປັນຕົ້ນ ກ່ຽວກັບການເພີ່ມຈຳນວນລົດຂົນສົ່ງໃຫ້ພຽງພໍ, ປັບປຸງມາດຕະຖານຂອງລົດຂົນສົ່ງ ແລະ ລາຄາຄ່າບໍລິການທີ່ສົມເຫດສົມຜົນ ແລະ ເປັນທີ່ຮັບໄດ້.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. | ກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ |
| 3. | ແຂວງສາລະວັນ | 01 ສະບັບ |
| 4. | ແຂວງເຊກອງ | 01 ສະບັບ |
| 5. | ແຂວງອັດຕະປື | 01 ສະບັບ |
| 6. | ເກັບມ້ຽນ | 01 ສະບັບ |